M14/1/AXLAO/HP1/LAO/TZ0/XX

22140581

International Baccalaureate®
Baccalauréat International
Bachillerato Internacional

**LAO A: LITERATURE – HIGHER LEVEL – PAPER 1**
**LAO A : LITTÉRATURE – NIVEAU SUPÉRIEUR – ÉPREUVE 1**
**LAOSIANO A: LITERATURA – NIVEL SUPERIOR – PRUEBA 1**

Friday 9 May 2014 (morning)
Vendredi 9 mai 2014 (matin)
Viernes 9 de mayo de 2014 (mañana)

2 hours / 2 heures / 2 horas

---

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a literary commentary on one passage only.
- The maximum mark for this examination paper is *[20 marks]*.

INSTRUCTIONS DESTINÉES AUX CANDIDATS

- N'ouvrez pas cette épreuve avant d'y être autorisé(e).
- Rédigez un commentaire littéraire sur un seul des passages.
- Le nombre maximum de points pour cette épreuve d'examen est *[20 points]*.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un comentario literario sobre un solo pasaje.
- La puntuación máxima para esta prueba de examen es *[20 puntos]*.


© International Baccalaureate Organization 2014

https://xtremepape.rs/

*ໃຫ້ເຈົ້າວິຈານໃນແງ່ວັນນະຄະດີຫ**ນຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້*

**1.**

ຂະນະນັ້ນ ພະພຸດທະເຈົ້າຊົງຫຼຽວເຫັນແມນຄຳໂຕນຶ່ງແລບລີ້ນໂຢູ່ທີ່ໂພນຈິກວຽງງົວໃຕ້ປາກຫ້ວຍ ເມື່ອຊົງເຫັນດັ່ງນັ້ນແລ້ວ ພະພຸດທະເຈົ້າກໍຊົງທຳອາການແຍ້ມໜົວໃຫ້ເຫັນເປັນນິມິດ ພະອານົນເຖຣາເຈົ້າ ເມື່ອຊົງເຫັນດັ່ງນັ້ນແລ້ວ ຊົງທູນຖາມຫາເຫດແຍ້ມໜົວ ພະພຸດທະເຈົ້າຈຶ່ງຕັດວ່າ ດູຣາພະອານົນ ພະຕະຖາຄົດໄດ້ເຫັນແລນຄຳໂຕນຶ່ງແລບລີ້ນໃຫ້ ເປັນເຫດແລ ແລ້ວພະພຸດທະເຈົ້າຈຶ່ງຊົງຕັດໄວ້ວ່າ ເມືອງສຸວັນນະພູມນີ້ເປັນທີ່ຢູ່ແຫ່ງນາກ ທັງຫຼາຍ ມີສຸວັນນະນາກເປັນເຄົ້າ ພ້ອມທັງຜີເສື້ອບົກທັງຫຼາຍພາຍໜ້າ […] ບ້ານເມືອງຈັກຍ້າຍທີ່ຢູ່ອາໃສປ່ຽນແປງໄປມາ ເປັນຫຼາຍຊື່ຫຼາຍສຽງແລ ປາງພ່ອງເຊື່ອໃນຄຸນແກ້ວສາມປະການສ່ວນນຶ່ງ ປາງພ່ອງນັ້ນບໍ່ມີຄວາມເຊື່ອໃນຄຸນແກ້ວສາມປະການເລີຍ ປາງພ່ອງກໍມີຄວາມເຊື່ອທັງໝົດ ປາງພ່ອງນັ້ນ ສ່ວນນຶ່ງເຊື່ອໃນມິດສາທິດຖິກໍມີ ປາງພ່ອງນສອງສ່ວນເຊື່ອໃນມິດສາທິດຖິກໍມີ ປາງພ່ອງນັ້ນ ມີຄວາມເຊື່ອໃນມິດສາທິດຖິໝົດກໍມີ ເຫດວ່າ ພະຕະຖາຄົດຫັນແລນແລບລີ້ນສອງແວ່ມ […] ເມື່ອນັ້ນ ພະພຸດທະເຈົ້າສະເດັດໜີຈາກແຄມໜອງຄັນແທ້ຜີເສື້ອນ້ຳ ໄປສູ່ໂພນຈິກວຽງງົວບ່ອນແລນຄຳແລບລີ້ນນັ້ນກ່ອນ ຄວາມຈິງແລນຄຳໂຕນັ້ນແມ່ນ ປັບພາສະນາກ ເຊິ່ງອາໃສຢູ່ພູເຂົາຫຼວງຫາກນີຣະມິດ ໃຫ້ເປັນເຫດນາກໂຕນັ້ປະດັບ ສັງວານຄຳທຳດ້ວຍແກ້ວ ປັບພາທັງມວນ ໂຕປັບພາສະນາກເອງແລ້ວ ຫາກນິມິດເປັນສາມ ຄົນນຸ່ງຜ້າຂາວ ເອົາບາດພະພຸດທະເຈົ້າແລ້ວເລີຍຂໍເອົາຮອຍພະບາດພະພຸດທະເຈົ້າໄວ້ ພະພຸດທະເຈົ້າຈຶ່ງ ຫຍຽບຮອຍພະບາດໄວ້ທີ່ກົກຈິກແກ້ວ ທີ່ພູເຂົາຫຼວງແກ່ປັບພາສະນາກ ຜູ້ອຸປະຖາກ ຈາກນັ້ນ ພະພຸດທະເຈົ້າກໍສະເດັດໄປສັນເພນທີ່ໂພນສັນ ໃນເວລານັ້ນນັ້ນຫັດຖີນາກນີຣະມິດເປັນຊ້າງເອົາດອກບົວມາໄຫວ້ຂໍເອົາຮອຍພະບາດຂອງ ພະພຸດທະເຈົ້າ ພະພຸດທະເຈົ້າກໍຊົງອະນຸຍາດໃຫ້ ໄວ້ທີ່ແຜ່ນຫີນແຄມນ້ຳໄກຊົ່ວຊ້າງຮ້ອງໄດ້ຍິນ ພຍານາກກໍຫຽວໄປອຸປະຖາກເລື້ອຍໆ ຄົນທັງຫຼາຍຈຶ່ງເອົາຄຳມາຫຼໍ່ຮູບໃຫຍ່ທໍ່ກັນກັບ ພະພຸດທະເຈົ້າແລ້ວເອົາໄປໄວ້ບ່ອນສັນເພນດິນແດງນັ້ນ ພຍານາກໂຕນັ້ນເອົາຫີນໄປ ໄວ້ບ່ອນຢູ່ຂອງຕົນ ສະນັ້ນຄົນທັງຫຼາຍຈຶ່ງເອີ້ນວ່າເວີ້ນສູ່ພະເຈົ້າມາຮອດສູ່ມື້ນີ້ ພະພຸດທະເຈົ້າໄດ້ ສະເດັດຈາກທີ່ນັ້ນໄປສູ່ເມືອງສີໂຄດຕະບອງ ໃນເວລາທີ່ພະພຸດທະເຈົ້າປະດັບຢູ່ທີ່ນັ້ນ ພຍາປາໂຕນຶ່ງເຫັນຣັສມີຂອງພະພຸດທະເຈົ້າ ພຍາປາໂຕນັ້ນພາບໍລິວານລ່ອງນ້ຳນຳ ພະພຸດທະເຈົ້າ ໃນເວລານັ້ນພະພຸດທະເຈົ້າກໍຊົງແຍ້ມພະໂອດໃຫ້ເປັນເຫດ ພະອານົນພະເປັນຜູອຸປະຖາກ ເມື່ອເຫັນເຫດດັ່ງນັ້ນ ຈຶ່ງທູນຖາມພະພຸດທະເຈົ້າວ່າ ພະອົງກໍແຍ້ມພະໂອດອັນໃດກໍຂ້າຈາ ພະພຸດທະເຈົ້າຈຶ່ງຕັດປອກວ່າ ດູຣາພະອານົນ ເຫັນພະຕະຖາຄົດຕະເຫັນພຍາປາໂຕນັ້ນພາບໍລິວານນຳມາຈຸ່ຝັ່ງນ້ຳ ພຍາປາໂຕນີ້ ເມື່ອຊາດກ່ອນໄດ້ບວດເປັນພິກສູໃນສາສນາຂອງພະພຸດທະເຈົ້າຊື່ວ່າກັສປະ ໄດ້ມາຢູ່ແຄມນ້ຳນີ້ ແລ້ວໄດ້ລ່ວງຕໍ່ພະວິໄນ ຄືເດັດເອົາໃບໄມ້ມາຕັກກິນນ້ຳ ເມື່ອໃກ້ຈຸຕິມີຄວາມກິນແໜງໃຈ ເມື່ອຕາຍໄປຈຶ່ງເກີດມາເປັນພຍາປາອາໃສຢູ່ນີ້

ບໍ່ປາກົດຊື່ຜູ້ແຕ່ງ *ນິທານອຸຣັງຄະທາດ* (ບໍ່ປາກົດປີແຕ່ງ)



https://xtremepape.rs/

**2.**

## ຄວາມເຫັນ

ແມງວັນວ່າ
ວຽງຈັນຄວນອາບເອ້ ແສນສິ່ງສິກກະປົກ ງາມໄດ໋
ທຸກຢ່າງຄວນມີຄົບ ຊະຊາຍຊຸມເປື້ອນ
ດິນຄວນອຸດົມດ້ວຍ ຂອງຄາວແນວເນົ່າ
ພ້ອມພໍ່າກອງຂີ້ເຫຍື້ອ ຄວນໃຫ້ຫລາກຫລາຍ

ຍຸງລາຍວ່າ
ຄວນໃຫ້ໜີບອກນໍ້າ ຕາມເດີ່ນຮຽງເຮືອນ
ຂອງເສດຊຸມປ໋ອງໂປະ ໂຕ່ງຝົນຂັງນໍ້າ
ແຄມທາງຄວນມີຫຍ້າ ຍາວສູງແສນແຫ່ງ
ໃນເຮືອນອຸແອ່ງນໍ້າ ໄຂໄວ້ຊູ່ວັນ

ໝູວ່າ
ຕາມເຮືອນຊານກໍ່ໃຫ້ ຈັດແຈ່ງຄືກັນ
ເຮັດໃຫ້ມັນລຸງລັງ ຢັ່ງປາຍຂອງໃຊ້
ເຄື່ອງຂອງເຮືອນເຮົາໃຫ້ ກອງກັນຍືນໄຂວ່
ໃນແຈເຮືອນຮົກເຮື້ອ ໂຮມໄວ້ແປດປົນ

ແມງມູມວ່າ
ບໍ່ຕ້ອງປັດກວາດພື້ນ ຝາພໍ່າເພດານ
ປ່ອຍໃຫ້ມັນມົວໝອງ ດ່າງດາວເປື້ອນ
ຈຶ່ງບໍ່ເປືອງເງິນຊື້ ສີທາ-ຟອຍກວາດ
ງາມເພາະຝອຍຝຸ່ນເອ້ ໄຍຫຍຸ້ງຍາບຍອຍ

ຄົນເອີຍ … ຄວາມຄຶດເຈົ້າ ມີດັ່ງໃດເດ
ເຫັນສົມຄວນຄືເຂົາ ບໍ່ນໍແນວນັ້ນ
ຄັນບໍ່ເຫັນດີດ້ວຍ ຄືເຂົາກອຍກ່າວ
ເຊີນຄົນລຸກຂຶ້ນເວົ້າ ໃນຫ້ອງທີ່ປະຊຸມ ເບິ່ງດູ

ຮຸ່ງອະລຸນແດນວິໄລ *ນໍ້າໃຈ* (1993)



https://xtremepape.rs/